ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4162 /ຕປທ.ພທກ

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

# ໜັງສືແຈ້ງເຊີນການປະມູນຈັດຊື້-ຈັດຈ້າງ

**ເຖິງ: ບັນດາບໍລິສັດສະໜອງ ອາຫານຫວ່າງ ແລະ ອາຫານທ່ຽງ**

**ເລື່ອງ: ເຊີນເຂົ້າຮ່ວມຍື່ນຊອງປະມູນສະໜອງຂອງອາຫານວ່າງ ແລະ ອາຫານທ່ຽງ ເພື່ອຮັບໃຊ້ກອງປະຊຸມ ລັດຖະມົນຕີຕ່າງ ປະເທດອາຊຽນ ຄັ້ງທີ 57 ແລະ ກອງ ປະຊຸມລັດຖະມົນຕີ ອື່ນໆ ທີ່ກ່ຽວຂ້ອງ ໃນວັນທີ 21-27 ກໍລະກົດ 2024.**

- ອີງຕາມການເຫັນດີຂອງ ຄະນະນຳກະຊວງການຕ່າງປະເທດ ຄັ້ງວັນທີ 24 ເມສາ 2024.

ກົມພິທີການທູດ ຂໍຖືເປັນກຽດຮຽນເຊີນມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈ, ມີອຸປະກອນພຽງພໍ ແລະ ໄດ້ມາດຕະຖານ ແລະ ມີປະສົບປະການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ເຂົ້າຮ່ວມການ ປະມູນຈັດຊື້-ຈັດຈ້າງ ສະໜອງອາຫານວ່າງ ແລະ ອາຫານທ່ຽງ ເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນ ໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມ ແຫ່ງຊາດ, ນະຄອນຫຼວງວຽງຈັນ.

ການປະມູນຈະດຳເນີນຕາມຂັ້ນຕອນການສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການ ຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019. ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນທີ່ ກົມພິທີການທູດ, ກະຊວງການຕ່າງປະເທດ ຕາມໂມງລັດຖະການ (ຊັ້ນ 1, ຕຶກ B, ໂທລະສັບ: 021- 454126) ຕັ້ງຢູ່: ຖະໜົນ 23 ສິງຫາ, ບ້ານ: ໂພນໄຊ, ເມືອງ: ໄຊເສດຖາ, ນະຄອນຫລວງວຽງຈັນ ເລີ່ມແຕ່ວັນທີ 25 ມິຖຸນາ 2024 ເປັນຕົ້ນໄປ.

ຊອງປະມູນຕ້ອງສົ່ງໃຫ້ກົມພິທີການທູດ, ກະຊວງການຕ່າງປະເທດ ຊ້າສຸດ ບໍ່ໃຫ້ກາຍ ເວລາ 08:30 ໂມງ ຂອງ ວັນທີ 11 ກໍລະກົດ 2024. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ຮັບພິຈາລະນາ ແລະ ຊອງປະມູນທີ່ ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ທຸກໆ ຊອງປະມູນຈະ ໄດ້ເປີດ ໃນເວລາ 09:00 ໂມງ ຂອງວັນທີ 11 ກໍລະກົດ 2024 ທີ່ ຫ້ອງປະຊຸມກົມພິທີການ ຊັ້ນ 1, ຕຶກ B, ກະຊວງ ການຕ່າງປະເທດ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.

ທຸກຊອງປະມູນຕ້ອງໄດ້ປະກອບເງິນສົດຄ້ຳປະກັນການປະມູນ ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາ ຄານ ຊຶ່ງມູນຄ່າຂອງການຄ້ຳປະກັນບໍ່ໃຫ້ຫລຸດ 2% (ສ່ວນຮ້ອຍ) ຂອງລາຄາປະມູນ ຫຼື ໃບແຊັກທະນາຄານມາພ້ອມ.

**ຫົວໜ້າກົມ**

ກະຊວງການຕ່າງປະເທດ
ກົມພິທີການທູດ

ອຳໄພ ກິນດາວົງ

Scanned with OKEN Scanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມພິທີການທູດ

ເລກທີ 4163 /ຕປທ.ພທກ
ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2024

# ເງື່ອນໄຂ ແລະ ຄໍາແນະນໍາສໍາລັບຜູ້ເຂົ້າຮ່ວມປະມູນຈັດຊື້-ຈັດຈ້າງ

- ອີງຕາມກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍ ທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.

ບໍລິສັດທີ່ເຂົ້າຮ່ວມການປະມູນສະໜອງອາຫານຫວ່າງ ແລະ ອາຫານທ່ຽງ ເພື່ອຮັບໃຊ້ກອງປະຊຸມລັດຖະມົນຕີຕ່າງປະເທດອາຊຽນ ຄັ້ງທີ 57 ແລະ ກອງປະຊຸມລັດຖະມົນຕີທີ່ກ່ຽວຂ້ອງ, ຊຶ່ງຈະຈັດຂຶ້ນໃນວັນທີ 21-27 ກໍລະກົດ 2024 ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ແມ່ນຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

<u>ເງື່ອນໄຂທົ່ວໄປ</u>

1. ຕ້ອງມີໃບທະບຽນວິສາຫະກິດ ແລະ ມີທຶນຈົດທະບຽນ 300 ລ້ານກີບ ຂຶ້ນໄປ (ກ່ອບປີ້ດ້ານຫຼັງມາພ້ອມ);
2. ຕ້ອງມີໃບອະນຸຍາດດໍາເນີນທຸລະກິດຕາມລະບຽບກົດໝາຍຂອງ ສປປ ລາວ ປະຈໍາປີ 2023 ຫຼື 2024;
3. ມີໃບທະບຽນອາກອນ ຫຼື ໃບຢັ້ງຢືນຊໍາລະອາກອນທີ່ໃຊ້ໄດ້ເຖິງສົກປີ 2024 ຫຼື 2023;
4. ມູນຄ່າລວມສິນຄ້າທີ່ສະເໜີມາໃນຊອງປະມູນຕ້ອງເປັນເງິນກີບ ແລະ ລວມພາສີອາກອນຕ່າງໆ,
5. ຕ້ອງມີເງິນຄໍ້າປະກັນຊອງປະມູນ 2% ຂອງມູນຄ່າ (ແບງກາລັງຕີ);
6. ບໍລິສັດຕ້ອງນໍາໃຊ້ວັດສະດຸອຸປະກອນທີ່ມີຄຸນນະພາບ ແລະ ຜູ້ຮັບໃຊ້ທີ່ໄດ້ມາດຕະຖານ, ມີຈໍານວນຄົບຖ້ວນ ແລະ ປະສົບການຮັບໃຊ້ກອງປະຊຸມລະດັບຊາດ ແລະ ສາກົນ ມາກ່ອນ ຢ່າງໜ້ອຍ 02 ປີ;
7. ບໍລິສັດຕ້ອງສະໜອງອາຫານຫວ່າງ ແລະ ອາຫານທ່ຽງ ທີ່ ຫໍປະຊຸມແຫ່ງຊາດ ແຕ່ວັນທີ 21-27 ກໍລະກົດ 2024 (ລາຍລະອຽດຕິດຄັດມາພ້ອມນີ້)
8. ຊອງປະມູນມີ 01 ຊອງ ຄື: ກາແດງ 01 ຊຸດ ແລະ ກ່ອບປີ້ 01 ຊຸດ;
9. ຕ້ອງເປັນບໍລິສັດທີ່ບໍ່ຖືກດໍາເນີນຄະດີໃນ ສປປ ລາວ.

ດັ່ງນັ້ນ, ຈຶ່ງກໍານົດເງື່ອນໄຂ ແລະ ແນະນໍາຜູ້ທີ່ຈະເຂົ້າຮ່ວມການປະມູນຕາມຂ້າງເທິງນັ້ນ.

ຫົວໜ້າກົມ

ອໍາໄພ ກົນດາວົງ

Scanned with OKEN Scanner

**ລາຍການອາຫານຫວ່າງ ແລະ ອາຫານທ່ຽງ**

**ແຕ່ວັນທີ 21-27 ກໍລະກົດ 2024**

| | | | |
|---|---|---|---|
| | **ວັນທີ 21/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 300 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 300 | ທ່ານ |
| 3 | ອາຫານທ່ຽງ | 182 | ທ່ານ |
| | **ວັນທີ 22/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 325 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 325 | ທ່ານ |
| 3 | ອາຫານທ່ຽງ | 193 | ທ່ານ |
| | **ວັນທີ 23/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 300 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 300 | ທ່ານ |
| 3 | ອາຫານທ່ຽງ | 194 | ທ່ານ |
| | **ວັນທີ 24/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 325 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 100 | ທ່ານ |
| 3 | ອາຫານທ່ຽງ | 219 | ທ່ານ |
| | **ວັນທີ 25/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 300 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 875 | ທ່ານ |
| 3 | ອາຫານທ່ຽງ | 206 | ທ່ານ |
| | **ວັນທີ 26/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 450 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 450 | ທ່ານ |
| 3 | ອາຫານທ່ຽງ | 284 | ທ່ານ |
| | **ວັນທີ 27/07/2024** | | |
| 1 | ອາຫານຫວ່າງ (ເຊົ້າ) | 875 | ທ່ານ |
| 2 | ອາຫານຫວ່າງ (ບ່າຍ) | 675 | ທ່ານ |
| 3 | ອາຫານທ່ຽງ | 505 | ທ່ານ |

Scanned with OKEN Scanner